ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

---

# ບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ

## (ປະຈຳເດືອນ ກຸມພາ 2015)

ຄະນະຮັບຜິດຊອບ ທລຍ ສູນກາງ

*ກະກຽມໂດຍ:* ໜ່ວຍງານຕິດຕາມປະເມີນຜົນ

13 ມີນາ 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກຂັ້ນ ສູນກາງ
**ກອງທຶນຫຼຸດຜ່ອນຄວາມທຸກຍາກ**

# ບົດສະຫຼຸບປະຈໍາເດືອນ ກຸມພາ 2015

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

ຮອດທ້າຍເດືອນ ກຸມພາ 2015, ການຈັດຕັ້ງປະຕິບັດໂຄງການຍ່ອຍ ໄດ້ມີຄວາມຄືບໜ້າຢ່າງເປັນຮູບປະທໍາ ດັ່ງນີ້:

### *1.1. ຮອບວຽນ 12 (ສົກປີ 2014-2015) ແລະ 13 (ສົກປີ 2015-2016)*

- ສໍາລັບຮອບວຽນ 12 (ສົກປີ 2014-2015) ມີຈໍານວນທັງໝົດ 400 ໂຄງການຍ່ອຍ ແລະ ຄາດຄະເນງົບປະມານ 9,668,326 ໂດລາສະຫະລັດ (ຢູ່ 37 ເມືອງ ໃນ 10 ແຂວງ, ຍັງບໍ່ລວມ 5 ເມືອງທົດລອງຂອງ CDD[1]) ທີ່ໄດ້ຜ່ານການຂໍອະນຸມັດຈາກຜູ້ໃຫ້ທຶນ. ໃນນັ້ນຈໍານວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າ 2,000,000 ໂດລາສະຫະລັດ ທີ່ໄດ້ຜ່ານການປະມູນແລ້ວ ແລະ ພວມຢູ່ໃນຂັ້ນຕອນກະກຽມຈັດຕັ້ງການປະຕິບັດ. ສ່ວນໂຄງການຍ່ອຍພາຍໃຕ້ທຶນຕ່າງປະເທດ ມີ 326 ໂຄງການ ທີ່ໄດ້ຮັບອະນຸມັດໃນການຈັດຕັ້ງປະຕິບັດ (NOL) ແມ່ນຢູ່ຂັ້ນຕອນກະກຽມຈັດຊື້-ຈັດຈ້າງ.
- ສໍາລັບຮອບວຽນ 12 ແມ່ນມີຄວາມແຕກຕ່າງກັບຮອບວຽນຜ່ານມາ ເພາະໄດ້ມີການທົດລອງໂຄງການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ (CDD) ຢູ່ 5 ເມືອງທົດລອງຂອງສາມແຂວງຄື: ເມືອງນອງ ແຂວງສະຫວັນນະເຂດ, ເມືອງໄຊ ແລະ ນາໝໍ້ ຢູ່ແຂວງ ອຸດົມໄຊ, ເມືອງນໍ້າບາກ ແລະ ຈອມເພັດ ຢູ່ແຂວງຫລວງພະບາງ. ສະນັ້ນ ຂັ້ນຕອນໃນການຈັດຕັ້ງປະຕິບັດແມ່ນແຕກຕ່າງກັບຮອບວຽນຜ່ານມາ ຈິ່ງເຮັດໃຫ້ເກີດຄວາມລ້າຊ້າ ກ່ຽວກັບການຈັດຕັ້ງປະຕິບັດ ຄາດວ່າຈະມີຢ່າງນ້ອຍ 42 ໂຄງການ ທີ່ຈະໄດ້ຖືກຄັດເລືອກໃນການຈັດຕັ້ງປະຕິບັດໃນເມືອງດັ່ງກ່າວ.
- ສໍາລັບໂຄງການທັງໝົດອາດມີຈໍານວນເພີ່ມຂຶ້ນ ໂດຍສະເພາະຢູ່ບັນດາແຂວງທີ່ຖືວ່າເປັນຮອບວຽນສຸດທ້າຍຂອງ ທລຍ 2 ເພາະຍັງມີງົບປະມານຂອງກຸ່ມທີ່ຍັງເຫລືອໃນບັນດາຮອບວຽນຜ່ານມາ ຊຶ່ງກໍາລັງສໍາຫລວດອອກແບບໂຄງການເພີ່ມ ແລະ ຂໍອະນຸມັດ ນໍາຜູ້ໃຫ້ທຶນຕື່ມ ຕາມງົບປະມານຕົວຈິງ (ຈະລາຍງານລະອຽດຫລັງຈາກໄດ້ຜ່ານການຮັບຮອງຈາກຜູ້ໃຫ້ທຶນ).

[1] CDD: Community Driven Development Approach (ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ)

- ສໍາລັບຮອບວຽນ 13 (ສົກປີ 2015-2016) ມີ 110 ໂຄງການ ພາຍໃຕ້ທຶນຊ່ວຍເຫລືອຂອງລັດຖະບານ (4,000,000 ໂດລາສະຫະລັດ) ແມ່ນໄດ້ຜ່ານການສໍາຫຼວດ-ອອກແບບ ລວມທັງຄາດຄະເນມູນຄ່າການກໍ່ສ້າງຂອງແຕ່ລະໂຄງການແລ້ວ ແລະ ມາຮອດປະຈຸບັນ ພວມຢູ່ໃນຂັ້ນຕອນກະກຽມຂໍການອະນຸມັດຈາກກະຊວງແຜນການ ແລະ ການລົງທຶນ.

1.2. <u>ຮອບວຽນ 11 (ສົກປີ 2013-2014)</u>

ໃນສົກປີ 2013 - 2014 (ຮອບວຽນ 11) ທລຍ ໄດ້ຈັດຕັ້ງປະຕິບັດວຽກງານຢູ່ 10 ແຂວງ, 42 ເມືອງ, 278 ກຸ່ມບ້ານ ແລະ ກວມເອົາ 1951 ບ້ານ, ໃນຮອບວຽນດັ່ງກ່າວ ທລຍ ໄດ້ໃຫ້ການສະໜັບສະໜູນຈໍານວນ 333 ໂຄງການ ແລະ ໃຊ້ງົບປະມານທັງໝົດປະມານ 9,698,846 ໂດລາສະຫະລັດ, ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ກຸມພາ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 310 ໂຄງການ (93.09%) ແມ່ນໄດ້ຈັດຕັ້ງປະຕິບັດສໍາເລັດ 100% ເພີ່ມຂຶ້ນຈາກເດືອນທີ່ຜ່ານມາ 4%, ສໍາລັບໂຄງການທີ່ມີຄວາມຄືບໜ້າຫລາຍກວ່າ 50% ແມ່ນມີຈໍານວນ 16 ໂຄງການ ແລະ ຄາດວ່າຈະສໍາເລັດໃນມໍ່ໆ ນີ້. ອີງຕາມຕາຕະລາງຂ້າງລຸ່ມນີ້ ເຫັນວ່າທຸກໂຄງການ ໃນຮອບວຽນດັ່ງກ່າວ ແມ່ນໄດ້ເລີ່ມຈັດຕັ້ງປະຕິບັດທັງໝົດ ມີພຽງແຕ່ 2% ຂອງໂຄງການທັງໝົດທີ່ຍັງມີຄວາມລ້າຊ້າເນື່ອງຈາກໂຄງການເຫລົ່ານັ້ນຕັ້ງຢູ່ເຂດທຸລະກັນດານ ສະນັ້ນພາກສ່ວນທີ່ກ່ຽວຂ້ອງແມ່ນໄດ້ປຶກສາຫາລືເພື່ອຫາທາງແກ້ໄຂ ໂດຍການປະສານສົມທົບກັບອໍານາດການປົກຄອງເມືອງ ເພື່ອໃຫ້ໂຄງການເຫລົ່ານັ້ນສໍາເລັດ ແລະ ສາມາດອໍານວຍຄວາມສະດວກສູງສຸດແກ່ຊຸມຊົນ ໂດຍການຕິດຕາມຢ່າງປົກກະຕິຂອງພະນັກງານ ທລຍ ແລະ ອົງການກ່ຽວຂ້ອງຂັ້ນທ້ອງຖິ່ນ (ລາຍລະອຽດຕາມຕາຕະລາງ 1 ແລະ 2)

**ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ຮອບວຽນ 11**

| ແຂວງ | ຈໍານວນໂຄງການ | ສໍາເລັດ 100% | ສໍາເລັດກວ່າ 50% | ສໍາເລັດບໍ່ຮອດ 50% | ສໍາເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 45 | 39 | 3 | 3 | 0 |
| ສາລະວັນ | 16 | 13 | 2 | 1 | 0 |
| ຊຽງຂວາງ | 29 | 29 | 0 | 0 | 0 |
| ຜົ້ງສາລີ | 23 | 23 | 0 | 0 | 0 |
| ຫຼວງນໍ້າທາ | 16 | 14 | 2 | 0 | 0 |
| ຫົວພັນ | 69 | 69 | 0 | 0 | 0 |
| ຫຼວງພະບາງ | 43 | 42 | 1 | 0 | 0 |
| ອຸດົມໄຊ | 54 | 54 | 0 | 0 | 0 |
| ອັດຕະປື | 18 | 10 | 5 | 3 | 0 |
| ເຊກອງ | 20 | 17 | 3 | 0 | 0 |
| **ລວມ** | **333** | **310** | **16** | **7** | **0** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 28 ກຸມພາ 2015*

ສໍາຫລັບໂຄງການເພີ່ມ 40 ໂຄງການ ອີງຕາມການຕິດຕາມປະສານງານຮ່ວມກັບພະນັກງານ ຕິດຕາມ ແລະ ປະເມີນຜົນ ຂັ້ນແຂວງ ສໍາລັບແຂວງທີ່ໄດ້ຮັບງົບປະມານເພີ້ມ ຈໍານວນ 40 ໂຄງການ ໃນ 7 ແຂວງ ຄື: ແຂວງ ຫຼວງນໍ້າທາ, ແຂວງ ຫົວພັນ, ແຂວງ ຊຽງຂວາງ, ແຂວງ ສະຫວັນນະເຂດ, ແຂວງ ສາລະວັນ, ແຂວງ ເຊກອງ ແລະ ແຂວງ ອັດຕະປື.

ມາຮອດປະຈຸບັນສາມາດສໍາເລັດ ໂຄງການທີ່ສາມາດສໍາເລັດໄດ້ 100% ມີ 30 ໂຄງການ. ໂຄງການທີ່ສໍາເລັດຫຼາຍກວ່າ 50 % ມີ 08 ໂຄງການ ແລະ ໂຄງການທີ່ສໍາເລັດໜ້ອຍກ່ວາ 50% ມີ 01ໂຄງ, ໂຄງການທີ່ບໍ່ທັນໄດ້ເລີ່ມລົງມື ມີ 01 ໂຄງການ ເນື່ອງຈາກວ່າປະຈຸບັນພື້ນທີ່ໂຄງການແມ່ນມີສາຍແດນຕິດກັບປະເທດ ຫວຽດນາມເຊິ່ງປະຈຸບັນແມ່ນລະດູຝົນ ຈຶ່ງເຮັດໃຫ້ບໍ່ສາມາດລົງມືກໍ່ສ້າງໄດ້ ແລະສ່ວນໂຄງການອີກຈໍານວນໜຶ່ງແມ່ນກໍາລັງຈັດຈັ້ງປະຕິບັດ ແລະໃກ້ຈະສໍາເລັດໃນໄວໆນີ້.

<u>ຕາລະລາງ 2 ຄວາມຄືບໜ້າຂອງ 40 ໂຄງການເພີ່ມ</u>

| ແຂວງ | ຈໍານວນ ໂຄງການ | 0% | <50% | >50% | 100% | ເຫດຜົນ |
|---|---|---|---|---|---|---|
| ແຂວງ ຫຼວງນໍ້າທາ | 1 | | | | 1 | ສໍາເລັດ |
| ແຂວງ ຫົວພັນ | 19 | | | | 19 | ສໍາເລັດ |
| ແຂວງ ຊຽງຂວາງ | 5 | | 1 | 4 | | ຈໍານວນໂຄງການຫຼາຍກວ່າ 50% ນັ້ນແມ່ນລໍຖ້າກວດ 100 |
| ແຂວງ ສະຫວັນນະເຂດ | 1 | 1 | | | | ໂຄງການຕັ້ງຢູ່ພື້ນທີ່ ທີ່ເປັນລະດູຝົນໃນປະຈຸບັນ |
| ແຂວງ ສາລະວັນ | 4 | | | | 4 | ສໍາເລັດ |
| ແຂວງ ເຊກອງ | 9 | | | 4 | 5 | ສໍາລັບ 4 ໂຄງການທີ່ຍັງບໍ່ສໍາເລັດຄາດວ່າຈະສະເລັດໃນໄວໆນີ້ |
| ແຂວງ ອັດຕະປື | 1 | | | | 1 | ສໍາເລັດ |
| ລວມ | 40 | 1 | 1 | 8 | 30 | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນຂັ້ນສູນກາງ 28 ກຸມພາ 2015

## 1.3. <u>ຮອບວຽນ 9 ແລະ ຮອບວຽນ 10</u> (ສົກປີ 2012-2013 ແລະ ສົກປີ 2013-2014)

ໃນຮອບວຽນທີ 9 ຫລຍ ໄດ້ໃຫ້ການສະໜັບສະໜູນຈໍານວນທັງໝົດ 262 ໂຄງການ ຢູ່ 7 ແຂວງເປົ້າຫມາຍ (ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຫົວພັນ, ຊຽງຂວາງ ແລະ ຫລວງນໍ້າທາ) ແລະ ນໍາໃຊ້ງົບປະມານທັງໝົດ 61,114,300,917 ກີບ ມີພຽງຈານວນ 258 ໂຄງການເທົ່ານັ້ນທີ່ໄດ້ຈັດຕັ້ງປະຕິບັດສາເລັດ 100 % ແລະ ງົບປະມານທີ່ໄດ້ນໍາໃຊ້ 60,099,742,167 ກີບ ຫລື 98.2 % ຂອງງົບປະມານທັງໝົດ. ເຊິ່ງການຈັດຕັ້ງປະຕິບັດ ບາງໂຄງການໃນຮອບວຽນດັ່ງກ່າວແມ່ນຍັງມີຄວາມຫລ້າຊ້າ ແລະ ບໍ່ສໍາເລັດຕາມຄາດໝາຍ, ມີ 4 ໂຄງການຍັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດຄື 1 ໂຄງການທີ່ຢູ່ແຂວງ ເຊກອງ ແລະ 2 ໂຄງການຢູ່ແຂວງ ອັດຕະປື ແລະ ສ່ວນ 1 ໂຄງການຢູ່ແຂວງ ຫລວງນໍ້າທາ ນັ້ນແມ່ນໄດ້ຍົກເລີກການກໍ່ສ້າງ. ສໍາລັບ 1 ໂຄງການທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຢູ່ແຂວງເຊກອງນັ້ນ ປະຈຸບັນ ເຈົ້າເມືອງດັກຈຶງ ໄດ້ສົ່ງໜັງສືຢ່າງເປັນທາງການ ເຖິງທາງການຫວຽດນາມ ເພື່ອຂໍອະນຸຍາດຂົນສົ່ງ ວັດສະດຸອຸປະກອນເຂົ້າເຂດກໍ່ສ້າງໂດຍຜ່ານປະເທດຫວຽດນາມ ແລະ ຄາດວ່າຈະສາມາດສໍາເລັດໄດ້ພາຍໃນເດືອນເມສາ 2015 ທີ່ຈະມາເຖິງນີ້. ສ່ວນ 2ໂຄງການຢູ່ແຂວງອັດຕະປື, ໂດຍອີງຕາມບົດລາຍງານຂອງ ຫລຍ ແຂວງອັດຕະປື ຄັ້ງວັນທີ 19 ກຸມພາ 2015, ທັງ 2 ໂຄງການ ຊຶ່ງແມ່ນບໍລິສັດ STS ເປັນຜູ້ຮັບເໝົາກໍ່ສ້າງ ໄດ້ສະເໜີຂໍເວລາຕື່ມ ພ້ອມໃຫ້ສັນຍາວ່າ

ຈະສຳເລັດພາຍໃນວັນທີ 12 ເມສາ 2015.

ໃນຮອບວຽນທີ 10 ທລຍ ໄດ້ໃຫ້ການສະໜັບສະໜູນທັງໝົດ 393 ໂຄງການ ແລະ ງົບປະມານທັງໝົດຈຳນວນ 79,119,001,522 ກີບ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແມ່ນຄືກັບທີ່ໄດ້ລາຍງານໃນເດືອນຜ່ານມາ, ມີຈຳນວນ 392 ໂຄງການທີ່ໄດ້ສາເລັດການກໍ່ສ້າງ ແລະ ງົບປະມານ 78,057,591,242 ກີບ (99%) ແມ່ນໄດ້ຖືກໂອນສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍເຫລົ່ານັ້ນ. ສຳລັບ 1 ໂຄງການ ແມ່ນຍັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດ ຄື: 1 ໂຄງການຢູ່ແຂວງ ຫຼວງນ້ຳທາ ເມືອງນາແລ ກຸ່ມສະແກນ (ບ້ານສະແກນ) ເປັນໂຄງການກໍ່ສ້າງຂົວອູ່ ມີຄວາມລ້າຊ້າ ເນື່ອງຈາກວ່າໂຄງການດັ່ງກ່າວເປັນໂຄງການທົດລອງ ແລະ ເປັນໂຄງການຂະໜາດໃຫຍ່ ອຸປະກອນສ່ວນໃຫຍ່ແມ່ນນຳມາຈາກຕ່າງປະເທດ (ປະເທດຫວຽດນາມ), ເປັນທຶນສົມທົບລະຫວ່າງ ທລຍ ແລະ ພາກສ່ວນອື່ນ.

## 2. ງົບປະມານ ແລະ ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນກຸມພາ 2015 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 60,099,742,167 ເທົ່າກັບ 98%, ຮອບວຽນ 10 ເບີກຈ່າຍໄປແລ້ວ 78,057,591,242 ເທົ່າກັບ 99% ແລະ ຮອບວຽນ 11 ແມ່ນໄດ້ປະຕິບັດຕາມຂັ້ນຕອນ ແລະ ລະບຽບການ. ສະເພາະຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈຳນວນ 68,393,846,094 ກີບ ຫລື ເທົ່າກັບ 88% ຂອງງົບປະມານທັງໝົດ (77.458.685.236 ກີບ) ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 2. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2015)**

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9(2011-2012) | 262 | 61,114,300,917 | 258 | 60,099,742,167 | 1,014,558,750 |
| ຮອບວຽນ 10( 2012-2013) | 393 | 79,125,251,302 | 392 | 78,057,591,242 | 1,067,660,060 |
| ຮອບວຽນ 11(2013-2014) | 333 | 77,458,685,236 | 310 | 68,393,846,094 | 9,064,839,142 |
| ຮອບວຽນ 12(2014-2015) | 400 | 9,668,326 USD or 77,346,606,240 ກີບ | 14 | - | ງົບປະມານ ອາດຈະມີການປ່ຽນແປງ ພາຍຫຼັງມີການປະມູນໂຄງການຍ່ອຍແລ້ວ. ຈານວນໂຄງການ ແລະງົບປະມານ ຍັງບໍ່ລວມ 5 ເມືອງທົດລອງ |
| ຮອບວຽນ 13 (ສົກປີ 2015-2016) | 110 | ບ້ອງທຶນສົມທົບ ລັດຖະບານແມ່ນສຳເລັດການສຳຫຼວດ-ອອກແບບແລ້ວ | 0 | - | - |
| ລວມ | 1.498 | 217,698,237,455 | 974 | 206,551,179,503 | 11,147,057,952 |

*ແຫຼ່ງຂໍ້ມູນ: ພະແນບໍລິຫານ - ການເງິນ, ທລຍ, 28 ກຸມພາ 2015*

ສໍາຫລັບງົບປະມານທີ່ຂ້າງເທິງນັ້ນແມ່ນບໍ່ໄດ້ລວມຮອບວຽນ 12 ເນື່ອງຈາກວ່າງົບປະມານອາດມີການປ່ຽນແປງ ພາຍຫລັງມີການປະມູນໂຄງການຫຍ່ອຍ.

- **ວຽກປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນທາງດ້ານໂພຊະນາການ**

ຈຸດປະສົງຂອງກິດຈະກໍາ ຄື ສົ່ງເສີມຜູ້ທຸກຍາກຈັດຕັ້ງປະຕິບັດກິດຈະກໍາສ້າງລາຍຮັບແບບເປັນກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເຊັ່ນ: ປູກຝັງລ້ຽງສັດ, ຜະລິດແຜ່ນແພ ແລະ ອື່ນໆ. ວຽກດ້ານໂພຊະນາການ ລວມມີ 4 ກິດຈະກໍາຫຼັກ ຄື: ສະໜອງອາຫານກາງເວັນໃຫ້ເດັກນ້ອຍ, ສົ່ງເສີມເຮັດສວນຜັກ, ກິດຈະກໍາສ້າງລາຍຮັບທີ່ສົ່ງເສີມສະເພາະດ້ານໂພຊະນາການ, ກິດຈະກໍາທີ່ກ່ຽວຂ້ອງດ້ານການໃຫ້ບໍລິການແມ່ ແລະ ເດັກ ຂອງ ພັກ-ລັດ.

ມາຮອດທ້າຍເດືອນ ກຸມພາ 2015, ບ້ານທີ່ຈັດຕັ້ງກິດຈະກໍາການທ້ອນເງິນ (ກຸ່ມ ກຊກ) ມີທັງໝົດ 85 ບ້ານ, 4 ເມືອງ (ເມືອງຮ້ຽມ ແລະ ເມືອງຊ້ອນຢູ່ແຂວງຫົວພັນ, ເມືອງເຊໂປນ ແລະ ເມືອງນອງຢູ່ແຂວງສະຫວັນນະເຂດ). ໃນນັ້ນ, ມີ 15 ບ້ານ ສໍາເລັດໃນການສ້າງຕັ້ງສະຖານທີ່ໂພຊະນາການແລ້ວ. ການສ້າງຕັ້ງກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແມ່ນສາມາດສ້າງໄດ້ຈໍານວນທັງໝົດ 306 ກຸ່ມ ເຊິ່ງມີສະມາຊິກທັງໝົດ 4,393 ຄົນ (ມີແມ່ຍິງ 3,256 ຄົນ) ມີຈໍານວນເງິນທ້ອນທັງໝົດ 190,260,090 ກີບ

ກິດຈະກໍາສ້າງສູນໂພສະນາການສໍາເລັດແລ້ວ 15 ສູນ, ເມືອງເມືອງຮ້ຽມ 6 ສູນ, ເມືອງຊ້ອນ 2 ສູນ (ແຂວງຫົວພັນ), ເມືອງເຊໂປນ 3 ສູນ ແລະ ເມືອງນອງ 3 ສູນ (ແຂວງ ສະຫວັນນະເຂດ)

<u>ຈໍານວນກິດຈະກໍາແຕ່ລະເມືອງ</u>

| ຊື່ບ້ານ | ສະມາຊິກ | ຜູ້ຍິງ | ຈໍານວນກິດຈະກໍາທີ່ຈະເຮັດ | | | | | | | | | ລວມຜູ້ໄດ້ຮັບທຶນງວດ 1 |
|---|---|---|---|---|---|---|---|---|---|---|---|---|
| | | | ລ້ຽງໝູ | ລ້ຽງໄກ່ | ລ້ຽງເປັດ | ປູກເຫັດ | ຕໍ່າຫູກ | ປາດູກ | ປາໜອງ | ປູກຜັກ | ແບ້ | |
| ເມືອງ ນອງ | 961 | 945 | 20 | 168 | 15 | 13 | 20 | | | | | 236 |
| ເມືອງ ເຊໂປນ | 886 | 654 | 40 | 166 | 21 | | 36 | 62 | 15 | 10 | | 350 |
| ເມືອງ ຊ້ອນ | 675 | 446 | 84 | 103 | | | 54 | | 17 | | 71 | 329 |
| ເມືອງ ຮ້ຽມ | 770 | 453 | 86 | 185 | | | 85 | | 43 | | 95 | 494 |
| ລວມທັງໝົດ: | 3,292 | 2,498 | 230 | 622 | 36 | 13 | 195 | 62 | 75 | 10 | 166 | 1,409 |
| ຄິດເປັນ % | | | | | | | | | | | | 43% |

- **ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ**

  - ສໍາເລັດການສັງລວມຂໍ້ມູນບຸລິມະສິດຄວາມຕ້ອງການທີ່ນອນໃນແຜນພັດທະນາກຸ່ມບ້ານໃນໄລຍະ 5 ປີ (2015-2019) ລວມມີ 278 ກຸ່ມບ້ານ 42 ເມືອງ ໃນ 10 ແຂວງ ແລະ ດຽວນີ້ແມ່ນຢູ່ຂັ້ນຕອນພິມເປັນປຶ້ມ;

ແລະ ສຳເລັດການສັງລວມຈຳນວນຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການຍ່ອຍຂອງຮອບວຽນ 11 ລວມມີ 351 ໂຄງການ, ມີຈຳນວນຜູ້ໄດ້ຮັບຜົນປະໂຫຍດທາງໂກງເຖິງ 172,303 ຄົນ; ຍິງ 85,907 ຄົນ; ຊົນເຜົ່າ 147,602 ຄົນ ແລະ ຜູ້ໄດ້ຮັບຜົນປະໂຫຍດທາງອ້ອມມີ127,250 ຄົນ; ຍິງ 66,096 ຄົນ; ຊົນເຜົ່າ 109,549 ຄົນ.

- ພາຍໃນເດືອນ ກຸມພາ 2015 ໜ່ວຍງານ ກະຈາຍຂໍ້ມູນຂ່າວສານໄດ້ສົ່ງບົດຂ່າວອອກທາງໜັງສືພິມລາຍວັນ ຈຳນວນ 3 ເລື່ອງ ຄື: ທລຍ ເນັ້ນໃສ່ການພັດທະນາຊັບພະຍາກອນມະນຸດ, ການແກ້ໄຂຄວາມທຸກຍາກຂອງແມ່ຍິງໃນຂະແໜງການນ້ຳສະອາດມີເປີເຊັນສູງກວ່າໝູ່, ໂຄງການຍ່ອຍຕ່າງໆທີ່ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານລາວມີຄຸນນະພາບ ແລະ ຜົນປະໂຫຍດແກ່ຊຸມຊົນເຂດຫ່າງໄກສອກຫລີກທີ່ສຸດ ນອກຈາກນັ້ນຍັງໄດ້ ສົ່ງບົດຂ່າວດັ່ງກ່າວນີ້ສົ່ງໃຫ້ລາຍການວິທະຍຸ ຂອງສະຫະພັນແມ່ຍິງ, ລຸງສ້າງ-ລຸງສາ ແລະ ຮອບບ້ານຜ່ານເມືອງອອກອາກາດ ແລະ ລົງ web-site ທລຍ.
- ສຳເລັດກວດກາແຜນການຈັດຕັ້ງປະຕິບັດການຈັດກອງປະຊຸມປະຈຳເດືອນ ແລະ ຝຶກອົບຮົມຄືນສຳລັບຜູ້ປະສານງານກຸ່ມບ້ານທີ່ມີແຜນຈັດຂຶ້ນໃນເດືອນ ກຸມພາ ແລະ ເດືອນມີນາ ຢູ່ແຂວງອຸດົມໄຊ, ສະຫັນນະເຂດ, ຊຽງຂວາງ, ສາລະວັນ ແລະ ແຂວງ ເຊກອງ ແລະ ສຳເລັດການປັບປຸງ Script s 2 ເລື່ອງວຽກງານ ລອງ ສົ່ງໃຫ້ ໂທລະພາບແຫ່ງຊາດລາວ ຊ່ອງສາມ ສືບຕໍ່ຕັດຕໍ່ສາລະຄະດີ;
- ສຳເລັດການກະກຽມຮູບພາບວາງສະແດງ ກອງປະຊຸມການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ແລະ ສຳເລັດແຜນແຈກຢາຍ ແລະ ຈັດພິມຄູ່ມື CDD, GESI, ປຶ້ມຄູ່ມືການຈັດກອງປະຊຸມ ວາງແຜນພັດທະນາຂັ້ນບ້ານ, ປຶ້ມ ແນະນຳ ທລຍ 2 ພາສາລາວ ແລະ ອັງກິດ ພ້ອມທັງສຳເລັດການປັບປຸງ ບົດບັນທຶກຄວາມເຂົ້າໃຈໃນການກະຈາຍຂໍ້ມູນເພື່ອອກອາກາດ ທາງເຄືອຂ່າຍ ວິທະຍຸຊຸມຊົນ ແລະ ສູນກາງ ຈຳນວນ 11 ລາຍການ.
- ໄດ້ມີການເຜີຍແຜ່ຂໍ້ມູນຂ່າວສານຜ່ານກະດານຂ່າວກຸ່ມບ້ານເຊິ່ງມີ 4 ຫົວຂໍ້ຂ່າວດັ່ງນີ້: ຜົນສຳເລັດກອງປະຊຸມປະຈຳເດືອນຂອງຜູ້ປະສານງານກຸ່ມບ້ານຂັ້ນເມືອງ, ຜົນກອງປະຊຸມປະຈຳເດືອນກັບຂະແໜງການກ່ຽວຂ້ອງ, ການເອົາໃຈໃສ່ປະຕິບັດນະໂຍບາຍ 60% ຂອງຈຳນວນງົບປະມານ 66% ຂອງໂຄງການຍ່ອຍຕ້ອງລົງສູ່ບ້ານທຸກຍາກ, ການກໍ່ສ້າງລະບົບນ້ຳລິນຊ່ວຍໃຫ້ຊຸມຊົນມີແຫຼ່ງລາຍຮັບ ນອກຈາກນັ້ນຍັງໄດ້ຕິດພາບການເຄື່ອນໄຫວກ່ຽວກັບໂຄງການຍ່ອຍ ແລະ ປະກາດວຽກງານຕ່າງໆ ພ້ອມທັງໄດ້ມີການເຜີຍແຜ່ຂ່າວສານທາງໜັງສືພິມເຊິ່ງມີ 3 ຫົວຂໍ້ຂ່າວດັ່ງນີ້: ຂັ້ນນຳສູນກາງລົງຢ້ຽມຢາມໂຄງການຍ່ອຍທີ່ກໍ່ສ້າງສຳເລັດ, ປະຊາຊົນສາມັກຄີອອກແຮງງານລວມປະກອບສ່ວນການກໍ່ສ້າງໂຄງການຍ່ອຍ, ການສ້າງຕົວແບບໃນການປົກປັກຮັກສາຄຸ້ມຄອງນຳໃຊ້.
- ສຳເລັດການຖ່າຍພາບເພື່ອສ້າງສາລະຄະດີ ກ່ຽວກັບການຈັດຕັ້ງປະຕິບັດແລະບູລະນະສ້ອມແປງໂຄງການຍ່ອຍນ້ຳລິນ, ນ້ຳບາດານ ແລະ ອາຄານໂຮງຮຽນ ເພື່ອຮັບໃຊ້ເຂົ້າໃນການຝຶກອົບຮົມໃຫ້ແກ່ຊຸມຊົນ.
- ວຽກງານທີ່ພົ້ນເດັ່ນທີ່ສຸດແມ່ນໄດ້ ສຳເລັດການຝຶກອົບຮົມຕົວຊີ້ວັດທັງ 10 ແຂວງ ມີຜູ້ເຂົ້າຮ່ວມທັງໝົດ 83 ຄົນ, ເປັນຍິງ 20 ຄົນ ມີບາງເມືອງແມ່ນພະນັກງານຂັ້ນເມືອງເຂົ້າຮ່ວມ ຜົນໄດ້ຮັບຈາກການຝຶກອົບຮົມໃນຄັ້ງນີ້

ແມ່ນມີບົດບາດສຳຄັນຫລາຍ ເພາະເຂົາເຈົ້າຈະນຳເອົາຄວາມຮູ້ທັງໝົດໄປຜັນຂະຫຍາຍ ແລະ ກວດກາຄວາມຖືກຕ້ອງຂອງຂໍ້ມູນ.

- ຕິດຕາມ-ກວດກາ ເອກະສານ ແລະ ຈຳນວນໂຄງການທັງໝົດ ຮອບວຽນ 12 ໃນການຂໍ NOL ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ລາຍລະອຽດຕ່າງໆ.
- ຕິດຕາມຄວາມຄືບໜ້າຂອງການປ້ອນຂໍ້ມູນເຂົ້າໃນລະບົບຖານຂໍ້ມູນ ເພື່ອກຽມລາຍງານ 6 ເດືອນຕົ້ນປີໃຫ້ລັດຖະບານ ແລະ ຜູ້ໃຫ້ທຶນ.
- ກະກຽມບົດລາຍງານໃຫ້ແກ່ຄະນະທີ່ຈະໄປເຂົ້າຮ່ວມກອງປະຊຸມ  ກ່ຽວກັບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ (CDD) ຢູ່ປະເທດ ຟີລິບປິນ ເຊິ່ງຈະມີ 15 ປະເທດເຂົ້າຮ່ວມໃນຄັ້ງນີ້.
- ຕອບສະໜອງຂໍ້ມູນການຈັດຕັ້ງປະຕິບັດໂຄງການຍ່ອຍໃຫ້ພະແນກ ຂະແໜງການ ທັງພາຍໃນຫ້ອງການ ທລຍ ພ້ອມທັງພາກລັດ ແລະ ຜູ້ໃຫ້ທຶນ ຈຳນວນ 13 ຄັ້ງ.
- ຕອບສະໜອງແຜນທີ່ໃຫ້ແກ່ຊ່ຽວຊານ ທລຍ ຈຳນວນ 3 ຄັ້ງ.
- ໄດ້ຕິດຕາມຄວາມຄືບໜ້າຂອງໂຄງການທີ່ບໍ່ໄດ້ນຳໃຊ້ຈຳນວນ 6 ໂຄງການໃນຮອບວຽນ 9, ເຊິ່ງມີ 3 ໂຄງການທີ່ແຂວງ ອຸດົມໄຊ ແມ່ນໄດ້ຖືກນຳໃຊ້ແລ້ວຕາມໃບແຈ້ງການເລກທີ່ 91/ຫສມ ລົງວັນທີ່ 13 ກຸມພາ 2015, 2 ໂຄງການຢູ່ແຂວງ ຜົ້ງສາລີ ແມ່ນຖືກນຳໃຊ້ເຊັ່ນກັນ ແລະ ອີກ 1 ໂຄງການຢູ່ແຂວງສາລະວັນ ໂຄງການສະໜອງຫລັກເສົາໄຟຟ້ານັ້ນແມ່ນສຳເລັດແລ້ວ ແຕ່ເນື່ອງຈາກທາງພາກລັດຍັງລໍຖ້າງົບປະມານໃນການດຶງຕາຄ່າຍສາຍໄຟຟ້າເຂົ້າໃຫ້ຊຸມຊົນ.
- ໄດ້ສຳເລັດການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານ ຕຳແໜ່ງລຸ່ມນີ້:
    1. ປະສານງານຂັ້ນແຂວງ ແຂວງສາລະວັນ: ໄດ້ດຳເນີນການປະເມີນ ແລະ ທົດສອບຜູ້ເຂົ້າສະໝັກຈຳນວນໜຶ່ງ; ແລະ ຈະສືບຕໍ່ປະເມີນຜູ້ສະໝັກທີ່ຍັງເຫລືອ ເຊິ່ງອີງຕາມເວລາທີ່ເໝາະສົມລະຫວ່າງໂຄງການ ແລະ ຜູ້ສະໝັກ (ຄາດຄະເນອາທິດທີ 3 ເດືອນມີນາ 2015).
    2. ບໍລິຫານ-ການເງິນ ແຂວງຊຽງຂວາງ: ມີຜູ້ສະໝັກ 7 ຄົນ ແລະ ໄດ້ທຳການທົດສອບໃນວັນທີ 06 ມີນາ 2015, ຊຶ່ງຈະມີການປະເມີນ ແລະ ສົມທຽບໃນຂັ້ນຕໍ່ໄປ. ຄາດຄະເນຈະໄດ້ຮັບພະນັກງານໃໝ່ໃນທ້າຍເດືອນມີນາ 2015.
    3. ຜູ້ຮັບຜິດຊອບການລາຍງານ ປະຈຳຫ້ອງການ ທລຍ ສູນກາງ: ໄດ້ປະກາດຮັບສະໝັກໃນວັນທີ 12ກຸມພາ 2015-06 ມີນາ 2015 ປະຈຸບັນກຳລັງສັງລວມຜູ້ສະໝັກ ແລະ ຈະດຳເນີນການປະເມີນຊີວະປະຫວັດຕາມຂັ້ນຕອນ ແລະ ລະບຽບການ.
    4. ວິສະວະກອນເມືອງດາກຈຶງ, ແຂວງເຊກອງ: ສັງລວມໄດ້ຜູ້ສະໝັກຈຳນວນໜຶ່ງ ແລະ ກຳລັງດຳເນີນການປະເມີນຊີວະປະຫວັດຜູ້ສະໝັກ
    5. ວິສະວກອນເມືອງໂພນໄຊ, ແຂວງຫລວງພະບາງ: ສາມາດຄັດເລືອກໄດ້ຜູ້ສະໝັກ ແລະ ໄດ້ເຂົ້າປະຈຳການໃນວັນທີ 01ກຸມພາ 2015

- ສຳເລັດການອອກສັນຍາເຮັດວຽກຂອງພະນັກງານ ປະຈຳປີ 2015: ສັນຍາການເຮັດວຽກໃນປີ 2015 ໄດ້ສົ່ງໃຫ້ພະນັກງານທົ່ວທຸກແຂວງເປັນທີ່ຮຽບຮ້ອຍ ແລະ ພ້ອມພຽງກັນໃນຕົ້ນເດືອນມີນາ 2015.
- ໄດ້ສຳເລັດຮວບຮວມເງິນປະກັນໄພປະຈຳປີ 2015: ໄດ້ໂອນເງິນທີ່ຊື້ປະກັນໄພທັງໝົດຂອງພະນັກງານ ໃຫ້ແກ່ບໍລິສັດປະກັນໄພແຫ່ງປະເທດລາວ ໃນຕົ້ນເດືອນມີນາ 2015.
- ຂຶ້ນແຜນລົງໄປສຳຫລວດຄວາມເພິ່ງພໍໃຈຂອງພະນັກງານ ກັບຊ່ຽວຊານດ້ານບຸກຄະລາກອນ: ອີງຕາມການກຳນົດແຜນເຮັດວຽກແມ່ນ 22-27 ກຸມພາ 2015 ແຕ່ໄດ້ໂຈ໊ະການເດີນທາງ ເພື່ອປະຕິບັດວຽກດັ່ງກ່າວ ເນື່ອງຈາກວ່າຈະມີການປະຊຸມກ່ຽວກັບການຂໍທຶນສືບຕໍ່ໂຄງການກັບຜູ້ໃຫ້ທຶນ ຢູ່ໃນໄລຍະດຽວກັນ.

5. ແຜນວຽກສຳລັບເດືອນ ມີນາ 2015

- ກະກຽມຄູ່ມືກ່ຽວກັບການເອົາຂໍ້ມູນຢູ່ໃນບ່ອນເກັບຂໍ້ມູນຂອງ ທລຍ ເພື່ອມາວິເຄາະຕາມຕົວຊີ້ວັດທີ່ໄດ້ຝຶກອົບຮົມໄປແລ້ວ.
- ເຂົ້າຮ່ວມກອງປະຊຸມດ້ານການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ໃນລະຫວ່າງວັນທີ 23-28 ມີນາ 2015 ທີ່ປະເທດ ຟີລິບປິນ.
- ກະກຽມບົດລາຍງານສະພາບໍລິຫານ ທລຍ ທີ່ຈະໄດ້ຈັດຂຶ້ນໃນເດືອນ ເມສາ 2015 ແລະ ກະກຽມຂໍ້ມູນເພື່ອປັບປຸງຂໍ້ມູນໃນວຽກງານແຜນທີ່ຂອງ ທລຍ ທີ່ຈະກວາມເອົາລາຍລະອຽດຕ່າງໆ ຂອງທີ່ຕັ້ງໂຄງການ, ຜູ້ໄດ້ຮັບປະໂຫຍດ, ໄລຍະທາງ ແລະ ອື່ນໆ.
- ເກັບກຳຂໍ້ມູນເພື່ອປະເມີນຄວາມເຂົ້າໃຈຂອງຊຸມຊົນ ( ວຽກງານ ກສກ) ພ້ອມທັງຕິດຕາມ-ກວດກາຂໍ້ມູນໂຄງການຍ່ອຍ ຮອບວຽນ 09, 10, 11 ແລະ 12 ເພື່ອເປັນເອກະສານໃນທ້າຍເດືອນ ມີນາ 2015.
- ປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານ ຕຳແໜ່ງລຸ່ມນີ້:
  - ບໍລິຫານການເງິນເມືອງປາກແຊງ, ແຂວງຫລວງພະບາງ
  - ສືບຕໍ່ດຳເນີນການຄັດເລືອກບໍລິຫານ-ການເງິນ ແຂວງຊຽງຂວາງ
  - ສືບຕໍ່ດຳເນີນການຄັດເລືອກຜູ້ຮັບຜິດຊອບການລາຍງານ ປະຈຳຫ້ອງການ ທລຍ ສູນກາງ
  - ສືບຕໍ່ດຳເນີນການຄັດເລືອກວິສະວະກອນເມືອງດາກຈຶງ, ແຂວງເຊກອງ
- ຂຶ້ນແຜນລົງໄປສຳຫລວດຄວາມເພິ່ງພໍໃຈຂອງພະນັກງານ ກັບຊ່ຽວຊານດ້ານບຸກຄະລາກອນ.
- ຈັດກຸ່ມສຳພາດຂອງພະນັກງານຢູ່ຂັ້ນສູນກາງ ເພື່ອເກັບຂໍ້ມູນກ່ຽວກັບຄວາມພໍໃຈຂອງພະນັກງານ.
- ອີງຕາມການແນະນຳຂອງຜູ້ໃຫ້ທຶນ ພະແນກວິຊາການ ແລະ ພັດທະນາຊຸມຊົນ ມີແຜນຈັດກອງປະຊຸມປຶກສາຫາລືກ່ຽວກັບການນຳໃຊ້ປື້ມຄູ່ມືປົກປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ ສະບັບປັບປຸງໃໝ່ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ທລຍ 2, ຈັດກອງປະຊຸມທີ່ພາກເໜືອໃນວັນທີ 18 ມີນາ 2015 , ພາກໄຕ້ຈັດໃນວັນທີ 20 ມີນາ 2015 ແລະ ທີ່ວຽງຈັນຈັດໃນວັນທີ 23 ມີນາ 2015.
- ຈັດກອງປະຊຸມແລກປ່ຽນບົດຮຽນການວາງແຜນແບບມີສ່ວນຮ່ວມກັບກະຊວງແຜນການ , ແພກການທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນອື່ນໆ ທີ່ນະຄອນຫລວງວຽງຈັນ.

- ສືບຕໍ່ກວດກາແຜນການຈັດຕັ້ງປະຕິບັດການຈັດກອງປະຊຸມປະຈໍາເດືອນ ແລະ ຝຶກອົບຮົມຄືນສໍາລັບຜູ້ປະສານງານກຸ່ມບ້ານທີ່ມີແຜນຈັດຂຶ້ນໃນເດືອນມີນາ ຢູ່ 5 ແຂວງທີ່ຍັງບໍ່ໄດ້ສົ່ງແຜນມາ.
- ຮ່າງ script cartoon animation ແລະ ຜະລິດສາລະຄະດີສັ້ນກ່ຽວກັບການຈັດຊື້ (ເລື່ອງຊື້ມັນຝະລັ່ງ) ແລະ ປັບປຸງຂໍ້ແນະນໍາກ່ຽວກັບການຈັດທັດສະນະສຶກສາຂັ້ນກຸ່ມບ້ານ.
- ສືບຕໍ່ເຊັນສັນຍາ ກັບບັນດາສື່ມວນຊົນຕ່າງໆ ເພື່ອສືບຕໍ່ກະຈາຍຂໍ້ມູນຂ່າວສານ ໃນປີ 2015 ແລະ ຈັດພິມແຜ່ນພັບແນະນໍາໂຄງການ ທລຍ ເປັນພາສາລາວ ແລະ ອັງກິດ ພ້ອມທັງຈັດພິມຄູ່ມື ວຽກງານບົດບາດຍິງ-ຊາຍ, ຄູ່ມື ການພັດທະນາທີ່ນັບເຄື່ອນໂດຍຊຸມຊົນ ແບບເຕັມຮູບແບບ, ຄູ່ມື ການຈັດກອງປະຊຸມ ວາງແຜນພັດທະນາຂັ້ນບ້ານ.
- ປະສານງານກັບ IT ການສ້າງ ໜ້າເວບຂອງ CDD ພ້ອມທັງເອົາຂໍ້ມູນທີ່ກ່ຽວກັບວຽກດັ່ງກ່າວລົງໃນໜ້າເວບດັ່ງກ່າວນັ້ນ ພ້ອມທັງຮ່າງ Script ສາລະຄະດີກ່ຽວກັບ ການເປັນຜູ້ນໍາທີ່ມີປະສິດທິດີມີຄວາມເຂັ້ມແຂງ ແລະ ປະສິດທິພາບ ແລະ ປະສານສົມທົບກັບ ພັດທະນາຊົນນະບົດ ຜະລິດກະເປົາ ແລະ ເສື້ອຮັບໃຊ້ກອງປະຊຸມ ອາຊຽນ ແລະ ກະກຽມແປ ສາລະຄະດີ ລອງ ເປັນພາສາອັງກິດສົ່ງໃຫ້ໂທລະພາບລາວ ຊ່ອງສາມ.

| ແທນ ຜູ້ອໍານວຍການບໍລິຫານ ທລຍ | ຮອງຫົວໜ້າພະແນກຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
|---|---|---|
| ບົວລີ ໄຊຍະວົງ<br>Boualy SAYAVONG | ດາວວຽງ ໄຊຍະຈັກ | ມະນີວັນ ອິນທະປັນຍາ |